ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 257 /ຫສນຍ

ນະຄອນຫລວງວຽງຈັນ, ວັນທີ 01. 03. 2022

# ແຈ້ງການ

ຮຽນ : - ທ່ານ ລັດຖະມົນຕີກະຊວງການຕ່າງປະເທດ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ ທີ່ນັບຖື.
- ທ່ານ ເຈົ້າແຂວງຫຼວງນໍ້າທາ ທີ່ນັບຖື.

ເລື່ອງ : ທິດຊີ້ນໍາກ່ຽວກັບການຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມຮ່ວມລະຫວ່າງເລຂາທິການໃຫຍ່, ປະທານປະເທດ ກັບນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 16 ກຸມພາ 2022 ກ່ຽວກັບການແກ້ໄຂບັນຫາສະພາບລົດຂົນສົ່ງສິນຄ້າ ສົ່ງອອກໄປ ສປ ຈີນ ອັ່ງອໍຢູ່ດ່ານບໍ່ເຕັນ, ແຂວງຫຼວງນໍ້າທາ.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ເອກະສານລາຍງານຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0035/ອຄ, ລົງວັນທີ 12 ມັງກອນ 2022;
- ອີງຕາມ ເອກະສານລາຍງານຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0245/ພບ.ກຄຣ.3, ລົງວັນທີ 20 ມັງກອນ 2022;
- ອີງຕາມ ເອກະສານລາຍງານຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 52/ຍທຂ, ລົງວັນທີ 26 ມັງກອນ 2022;
- ອີງຕາມ ທິດຊີ້ນໍາຂອງກອງປະຊຸມຮ່ວມລະຫວ່າງເລຂາທິການໃຫຍ່, ປະທານປະເທດ ກັບນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 16 ກຸມພາ 2022 ຕາມທີ່ລະບຸໃນແຈ້ງການ ສະບັບເລກທີ 12/ຫສພ, ລົງວັນທີ 23 ກຸມພາ 2022 ຂອງຫ້ອງວ່າການສູນກາງພັກ.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນໍາຂອງກອງປະຊຸມຮ່ວມລະຫວ່າງເລຂາທິການໃຫຍ່, ປະທານປະເທດ ກັບນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: ໃຫ້ບັນດາກະຊວງກ່ຽວຂ້ອງ ເປັນໃຈກາງສົມທົບກັບອົງການປົກຄອງແຂວງຫຼວງນໍ້າທາ, ອົງການປົກຄອງແຂວງອຸດົມໄຊ, ບໍລິສັດ ທາງລົດໄຟ ລາວ-ຈີນ ແລະ ພາກສ່ວນກ່ຽວຂ້ອງ ຮີບຮ້ອນປຶກສາຫາລື ແລະ ເຈລະຈາກັບຝ່າຍຈີນ ເພື່ອເລັ່ງແກ້ໄຂບັນຫາການແອອັດ ຂອງລົດຂົນສົ່ງສິນຄ້າ ຢູ່ແຂວງຫຼວງນໍ້າທາ ແລະ ແຂວງອຸດົມໄຊ ໃຫ້ຕົກໄປໂດຍໄວທີ່ສຸດ ແລະ ກະກຽມຄວາມ



Generated by CamScanner

ພ້ອມດ້ານຕ່າງໆ ເພື່ອຮອງຮັບການຂະຫຍາຍຕົວຂອງການຜະລິດ, ການບໍລິການ ຂົນສົ່ງສິນຄ້າ ໃຫ້ໄດ້ຕາມມາດຕະຖານສາກົນ ໃນໄລຍະກາງ ແລະ ໄລຍະຍາວ, ໂດຍໃຫ້ເລັ່ງເອົາໃຈໃສ່ປະຕິບັດ ຄືດັ່ງນີ້:

1. <u>ມາດຕະການໄລຍະສັ້ນ</u>:

1) ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບກະຊວງການຕ່າງປະເທດ, ຄະນະກຳມະການຮ່ວມມືລາວ-ຈີນ, ອົງການປົກຄອງແຂວງຫຼວງນ້ຳທາ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ເລັ່ງປະສານສົມທົບ ແລະ ເຈລະຈາກັບຝ່າຍຈີນ ໃຫ້ມີຄວາມເຂົ້າໃຈເປັນເອກະພາບ ກ່ຽວກັບການແກ້ໄຂບັນຫາລົດອັ່ງອໍ ຢູ່ດ່ານບໍ່ເຕັນ ໂດຍໄວ ໂດຍໃຫ້ຊ່ວຍກັນສຸມໃສ່ແກ້ໄຂບັນຫາທີ່ຈຳເປັນທີ່ສຸດ ໃນເວລານີ້ກ່ອນ, ໃນນີ້ບໍ່ທັນໃຫ້ສະເໜີບັນຫາໃຫ້ຝ່າຍຈີນ ແກ້ໄຂຫຼາຍບັນຫາບາດດຽວເທື່ອ, ໃຫ້ມີການຈັດລຽງລຳດັບບຸລິມະສິດ ເພື່ອຮ່ວມກັນແກ້ໄຂ ແຕ່ບໍ່ເປັນການມ້າງລະບຽບການຂອງຝ່າຍຈີນ, ໂດຍໃຫ້ຈັດລຽງບຸລິມະສິດຮ່ວມກັນ ແກ້ໄຂຄືດັ່ງນີ້:

- ໃຫ້ເພີ່ມຄົນຂັບລົດເສື້ອຂາວ, ເພີ່ມຈຳນວນລົດຂົນສົ່ງສິນຄ້າ ແລະ ເພີ່ມເວລາເຮັດວຽກຂອງເຈົ້າໜ້າທີ່ຢູ່ດ່ານ; ລວມທັງຄົ້ນຄວ້າ ແລະ ສະເໜີໃຫ້ຝ່າຍຈີນ ພິຈາລະນາເປີດດ່ານປາງໄຮ-ຊ້າເຫີ; ດ່ານສາກົນລານຕຸ້ຍ-ເມືອງຄຳ; ດ່ານບ້ານຂວາງ-ແມ້ວຈາຍ; ດ່ານທາງນ້ຳຂອງ 240, ຊ່ອງທາງການຂົນສົ່ງສິນຄ້າສະເພາະ ຢູ່ດ່ານບໍ່ເຕັນ-ບໍ່ຫານ ແລະ ດ່ານອື່ນໆ ຕາມຄວາມຈຳເປັນຕົວຈິງ.

- ໃຫ້ເລັ່ງປັບປຸງຂອດການປະສານງານ ແລະ ການຈັດຕັ້ງການຂົນສົ່ງສິນຄ້າຂອງລົດຂົນສົ່ງສິນຄ້າ ທີ່ຈະໄປຜ່ານດ່ານດັ່ງກ່າວ ໂດຍໃຫ້ມີແຜນການຈັດສັນເວລາ ຢ່າງລະອຽດ. ພ້ອມນັ້ນ ກໍໃຫ້ຄົ້ນຄວ້າ ແລະ ວາງມາດຕະການ ໃນການຈັດສັນບ່ອນຈອດລົດຂົນສົ່ງສິນຄ້າ ຢູ່ເຂດດ່ານສາກົນບໍ່ເຕັນ, ແຂວງຫຼວງນ້ຳທາ ໂດຍໃຫ້ມີການບໍລິຫານຈັດການເປັນຕົ້ນ ໃຫ້ມີການລົງທະບຽນ, ຈັດບັດຄິວ ເພື່ອລະບາຍລົດອອກໄປຕາມຈຳນວນທີ່ໄດ້ຮອງຮັບໃນແຕ່ລະວັນ ເພື່ອໃຫ້ສາມາດຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດເປັນມິດກັບສິ່ງແວດລ້ອມຕາມເສັ້ນທາງ, ພ້ອມກັນນັ້ນກໍໃຫ້ສືບຕໍ່ເລັ່ງລະບາຍລົດອອກໃຫ້ໄດ້ຫຼາຍ, ໄດ້ໄວກວ່າທີ່ເປັນຢູ່ ເພື່ອແກ້ໄຂບັນຫາລົດອັ່ງອໍທີ່ມີຢູ່ໃນປັດຈຸບັນ ໃຫ້ຕົກໄປໂດຍໄວ ແລະ ໃຫ້ສາມາດແກ້ໄຂສະພາບການຈອດລົດລຽນກັນເປັນແຖວຍາວ ຕາມເສັ້ນທາງ ແຕ່ດ່ານບໍ່ເຕັນ ຫາເມືອງນາໝໍ້ ຫຼຸດລົງເທື່ອລະກ້າວ.

- ໃຫ້ເລັ່ງການເຈລະຈາກັບບໍລິສັດ ທາງລົດໄຟລາວ-ຈີນ ກ່ຽວກັບການຂົນສົ່ງສິນຄ້າ ຜ່ານທາງລົດໄຟ ໃຫ້ສາມາດຂົນສົ່ງ ໄດ້ເປັນປົກກະຕິ. ພ້ອມທັງ ດຳເນີນການປັບປຸງໂຄງລ່າງພື້ນຖານຂອງສະຖານີລົດໄຟ ໃນແຕ່ລະຈຸດ, ຍົກລະດັບຈຸດບໍລິການຂົນສົ່ງສິນຄ້າ ຢູ່ຕາມສະຖານີຕ່າງໆ ເພື່ອໃຫ້ສາມາດຮອງຮັບການຂົນສົ່ງສິນຄ້າ ນຳເຂົ້າ-ສົ່ງອອກ ຜ່ານທາງລົດໄຟ-ລາວຈີນ ໃຫ້ຫຼາຍຂຶ້ນ. ພ້ອມດຽວກັນ, ໃຫ້ສືບຕໍ່ເຜີຍແຜ່ຂໍ້ມູນຂ່າວສານ ການບໍລິການທາງລົດໄຟ ໃຫ້ພາກລັດ ແລະ ທຸລະກິດ ຢ່າງທົ່ວເຖິງ ຜ່ານລະບົບອອນລາຍ ແລະ ຊ່ອງທາງອື່ນໆ ເພື່ອໃຫ້ຜູ້ຊົມໃຊ້ສາມາດເຂົ້າເຖິງຂໍ້ມູນໄດ້ຢ່າງທົ່ວເຖິງ. ພ້ອມນັ້ນ, ກໍໃຫ້ເອົາໃຈໃສ່ແກ້ໄຂບັນຫາຫຍຸ້ງຍາກຕ່າງໆ ເປັນຕົ້ນ ບັນຫາການຈອງ ແລະ ນຳໃຊ້ຕູ້ສິນຄ້າລົດໄຟ ການຂາຍປີ້ລົດໄຟ ແລະ ບັນຫາອື່ນໆ ໃຫ້ມີຄວາມໂປ່ງໃສ, ວ່ອງໄວ, ຍຸຕິທຳ ແລະ ບໍ່ໃຫ້ມີຊ່ອງວ່າງໃຫ້ຄົນບໍ່ດີສວຍໃຊ້ໂອກາດ ທີ່ຈະພາໃຫ້ເຊື່ອມເສຍພາບພົດ ຕໍ່ພັກ ແລະ ລັດຖະບານ.

- ໃຫ້ມີການກວດກາ, ປະເມີນ ແລະ ບໍລິຫານຈັດການ ຈຳນວນລົດຂົນສົ່ງສິນຄ້າ ທີ່ເດີນທາງມາຈາກປະເທດໃກ້ຄຽງ ຈະຜ່ານໄປຍັງ ສປ ຈີນ ນັ້ນ, ເພື່ອຫຼຸດຜ່ອນການແອອັດ ຂອງລົດຂົນສົ່ງສິນຄ້າ ແລະ ມີຄວາມຄ່ອງຕົວຂຶ້ນ.

2) ໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງຮີບຮ້ອນກະກຽມບຸກຄະລາກອນ, ເຄື່ອງມືຮັບໃຊ້ ໃຫ້ແກ່ການແຈ້ງ ແລະ ກວດປ່ອຍສິນຄ້າກະສິກຳສົ່ງອອກ ຜ່ານທາງລົດໄຟ-ລາວຈີນ ຢູ່ສະຖານີລົດໄຟນາເຕີຍ ແລະ ສະຖານີອື່ນໆ ທີ່ມີເງື່ອນໄຂ ເພື່ອແກ້ໄຂບັນຫາໃນປັດຈຸບັນ.

3) ໃຫ້ກະຊວງການຕ່າງປະເທດ ເປັນໃຈກາງປະສານສົມທົບກັບກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງ ເລັ່ງສືບຕໍ່ເຈລະຈາກັບຝ່າຍຈີນ ແລະ ປະເທດໃກ້ຄຽງ ເພື່ອຮ່ວມກັນຄົ້ນຄວ້າກ່ຽວກັບຄວາມເປັນໄປໄດ້ໃນການສ້າງຕັ້ງສູນກັກກັນເພື່ອກວດເຊື້ອ ແລະ ປິ່ນປົວພະຍາດໂຄວິດ-19 ສຳລັບລົດຂົນສົ່ງສິນຄ້າ ຢູ່ບໍລິເວນດ່ານຊາຍແດນ, ດ້ານໜຶ່ງ ເພື່ອຮັບປະກັນ ໃນການລະບາຍຜູ້ທີ່ຈະເຂົ້າໄປ ສປ ຈີນ ເພີ່ມຕື່ມຢູ່ບາງຈຸດບາງແຂວງ ລຽບຕາມຊາຍແດນ ເພື່ອບໍ່ໃຫ້ມີສະພາບລົດອັ່ງອໍຫຼາຍ ຢູ່ຈຸດດຽວ.

4) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ສະເໜີໃຫ້ຝ່າຍຈີນພິຈາລະນາເປີດການຂົນສົ່ງສິນຄ້າເຂົ້າ-ອອກ ຢູ່ດ່ານສາກົນທາງນ້ຳ ລະຫວ່າງປະເທດ ຢູ່ແມ່ນ້ຳຂອງຕອນເໜືອ ໃຫ້ເປັນ



Generated by CamScanner

ປົກກະຕິ ຄືກັນກັບການຂົນສົ່ງທາງບົກ ເພື່ອດຸ່ນດ່ຽງ ແລະ ແປງເປົ້າການຂົນສົ່ງທາງບົກ ບໍ່ໃຫ້ມີລົດອັ່ງອໍຢູ່ດ່ານບໍ່ເຕັນ-ບໍ່ຫານ ຄືປັດຈຸບັນ. ພ້ອມນັ້ນ, ກໍ່ໃຫ້ຄົ້ນຄວ້າກ່ຽວກັບນະໂຍບາຍຍົກເວັ້ນຄ່າທຳນຽມການອອກອະນຸຍາດແລ່ນເຮືອ, ເອກະສານດຳເນີນທຸລະກິດຂົນສົ່ງທາງນ້ຳ ປະຈຳປີ ແລະ ອື່ນໆ ໃຫ້ແກ່ຜູ້ດຳເນີນການຂົນສົ່ງຂອງລາວ.

5) ໃຫ້ກະຊວງການຕ່າງປະເທດ ປະສານສົມທົບກັບຝ່າຍຈີນ ເພື່ອພິຈາລະນາ ຕ້ອນຮັບການນຳຂັ້ນສູງຂອງ ສປປ ລາວ ທີ່ຈະເດີນທາງໄປຢ້ຽມຢາມ ສປ ຈີນ ໃນໄວໆນີ້ ແລະ ຖືໂອກາດປຶກສາຫາລືວຽກງານຮ່ວມກັນ ເປັນຕົ້ນ ການແກ້ໄຂບັນຫາ ສະພາບລົດຂົນສົ່ງສິນຄ້າ ສົ່ງອອກໄປ ສປ ຈີນ ອັ່ງອໍຢູ່ດ່ານບໍ່ເຕັນ,ແຂວງຫຼວງນ້ຳທາ ແລະ ວຽກງານອື່ນໆ.

2. <u>ມາດຕະການໄລຍະກາງ ແລະ ໄລຍະຍາວ</u>:

1) ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ບັນດາອົງການປົກຄອງທ້ອງຖິ່ນ ສືບຕໍ່ອອກນິຕິກຳຜັນຂະຫຍາຍ ແລະ ເຜີຍແຜ່ກ່ຽວກັບລາຍການພືດສົ່ງອອກໄປ ສປ ຈີນ ເປັນແຕ່ລະຊະນິດ ຕາມອານຸສັນຍາການສົ່ງອອກພືດ ລະຫວ່າງ ສປປ ລາວ ແລະ ສປ ຈີນ ເພື່ອເປັນຂໍ້ມູນໃຫ້ກັບບັນດາຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈປູກພືດເພື່ອສົ່ງອອກໄປ ສປ ຈີນ. ພ້ອມທັງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດປະເພດສິນຄ້າກະສິກຳສົ່ງອອກ ທີ່ເປັນບຸລິມະສິດ, ທັງໃຫ້ເກັບກຳຂໍ້ມູນຜົນຜະລິດ ແລະ ແຜນການສົ່ງອອກຂອງແຕ່ລະແຂວງຜ່ານດ່ານຕ່າງໆ.

2) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ບໍລິສັດ ທາງລົດໄຟລາວ-ຈີນ ປຶກສາຫາລື ແລະ ເຈລະຈາກັບຝ່າຍຈີນ ໂດຍການນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ໃຫ້ເກີດປະໂຫຍດສູງສຸດ, ໃຫ້ໄດ້ປະລິມານຫຼາຍທີ່ສຸດ ແລະ ມີຫຼາຍຊະນິດສິນຄ້າ, ຫຼຸດຜ່ອນການແອອັດ ຂອງເສັ້ນທາງລົດຂົນສົ່ງ. ພ້ອມນັ້ນ, ກໍ່ໃຫ້ປັບປຸງມາດຖານເຕັກນິກ ການຂົນສົ່ງທາງລົດໂດຍສານ ໃຫ້ດີຂຶ້ນ. ໃນນັ້ນ ທາງດ້ານນິຕິກຳ, ອັນໃດບໍ່ທັນມີຕ້ອງໄດ້ຄົ້ນຄວ້າສ້າງໃໝ່, ອັນໃດມີແລ້ວ ແຕ່ບໍ່ສອດຄ່ອງກັບສະພາບຕົວຈິງ ຕ້ອງໄດ້ຮີບຮ້ອນປັບປຸງ ລວມທັງນິຕິກຳຂົນສົ່ງທາງລົດໄຟ ກໍ່ຄືບໍລິສັດ ທີ່ເຮັດທຸລະກິດຂົນສົ່ງ.

3) ໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງແຂວງອຸດົມໄຊ, ອົງການປົກຄອງແຂວງຫຼວງນ້ຳທາ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ປັບປຸງຂັ້ນຕອນ ແລະ ອັດຕາການເກັບຄ່າທຳນຽມ, ຄ່າບໍລິການໃນການແຈ້ງພາສີ, ສາງຄ່ຽນຖ່າຍ ແລະ ການກວດປ່ອຍສິນຄ້າ ຂອງເຈົ້າໜ້າທີ່ລັດ, ບໍລິສັດສາງພັກ ແລະ ຄ່ຽນຖ່າຍສິນຄ້າ ໃຫ້ມີຄວາມໂປ່ງໃສ ແລະ ເອກະພາບກັນ, ພ້ອມທັງຄົ້ນຄວ້າການສ້າງສາງພັກສິນຄ້າ ຢູ່ແຂວງອຸດົມໄຊ ແລະ ສາງທ່າບົກ (Dry Port) ຢູ່ໃກ້ກັບສະຖານີລົດໄຟນາເຕີຍ, ແຂວງຫຼວງນ້ຳທາ, ພ້ອມທັງ ສົມທົບກັບຜູ້ປະກອບການຂົນສົ່ງ ໃນການຕອບສະໜອງລົດຂົນສົ່ງສິນຄ້າສົ່ງອອກໃຫ້ພຽງພໍ, ໄດ້ມາດຕະຖານ ແລະ ໃຫ້ເຂັ້ມງວດຕໍ່ມາດຕະການປ້ອງກັນພະຍາດໂຄວິດ-19 ທີ່ຝ່າຍຈີນ ກຳນົດ.

4) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ບໍລິສັດ ທາງລົດໄຟລາວ-ຈີນ ແລະ ພາກສ່ວນກ່ຽວຂ້ອງ ກຳນົດບັນດາລາຍການສິນຄ້າ, ມາດຕະຖານ, ການເກັບມ້ຽນ ແລະ ຮູບແບບການອຳນວຍຄວາມສະດວກ ໃນການຂົນສົ່ງສິນຄ້າຜ່ານທາງລົດໄຟ ລາວ-ຈີນ ອອກໄປ ສປ ຈີນ ໃຫ້ໄດ້ຫຼາຍ, ໃຫ້ໄວ ແລະ ໃຫ້ໄດ້ມາດຕະຖານສາກົນ ໂດຍສະເພາະແມ່ນການຄຸ້ມຄອງ, ການສະໜອງຂໍ້ມູນ, ຂັ້ນຕອນ ແລະ ປັບປຸງມາດຕະຖານ ໃນການບໍລິການ ໃຫ້ທັນສະໄໝ, ໂປ່ງໃສ, ວ່ອງໄວ ແລະ ເປັນທີ່ໜ້າເຊື່ອຖື ຂອງສັງຄົມ. ໃນນັ້ນ, ໃຫ້ຮີບຮ້ອນຄົ້ນຄວ້າສ້າງສາງເຢັນເພື່ອເກັບຮັກສາສິນຄ້າ ທີ່ເໜົ່າເປື່ອຍງ່າຍ ຫຼື ເຂດຄວາມປອດໄພ ກ່ອນການສົ່ງອອກສິນຄ້າ ຢູ່ບໍລິເວນຊາຍແດນ ຫຼື ເຂດໃກ້ຄຽງ.

5) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງ ໃຫ້ຮີບຮ້ອນຄົ້ນຄວ້າ ແລະ ດຳເນີນການກໍ່ສ້າງຈຸດຄ່ຽນຖ່າຍສິນຄ້າ (ທ່າບົກ) ຢູ່ຕາມສະຖານີລົດໄຟແຫ່ງຕ່າງໆ ຕາມແຜນການທີ່ວາງໄວ້ ເພື່ອຮັບປະກັນຄຸນນະພາບຂອງສິນຄ້າ ແລະ ຫຼຸດຜ່ອນການຂົນສົ່ງທາງລົດ ໃນໄລຍະໄກ. ພ້ອມທັງປຶກສາຫາລື ແລະ ເອກະພາບກັບຝ່າຍຈີນ ເພື່ອກຳນົດປະເພດສິນຄ້າ ທີ່ຈຳເປັນຕ້ອງໄດ້ຂົນສົ່ງຜ່ານທາງລົດໄວໂດ ແລະ ສິນຄ້າໃດສາມາດຂົນສົ່ງທາງລົດໄຟ, ໃນນັ້ນ ບັນຫາສຳຄັນ ຕ້ອງໄດ້ປັບປຸງຍົກລະດັບ ແລະ ກໍ່ສ້າງເສັ້ນທາງເຂົ້າສູ່ສະຖານີລົດໄຟ ຢູ່ຈຸດຕ່າງໆ ຕື່ມອີກ.



Generated by CamScanner

6) ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງ ປັບປຸງຂະບວນການ, ຂັ້ນຕອນ, ກຳມະວິທີໃນການຜະລິດ, ການປຸງແຕ່ງສິນຄ້າ ເພື່ອສົ່ງອອກ ໃຫ້ໄດ້ມາດຕະຖານ-ເຕັກນິກ ຂອງສາກົນ ໂດຍມີການເຈລະຈາ ແລະ ຮອງຮັບຕໍ່ປະເພດສິນຄ້າ ກັບ ສປ ຈີນ ແລະ ບັນດາປະເທດອື່ນໆ.

7) ໃຫ້ກະຊວງໂຍທາທິການແລະ ຂົນສົ່ງ ເປັນໃຈກາງສົມທົບກັບກະຊວງສາທາລະນະສຸກ ປັບປຸງດ້ານສະພາບ, ເຕັກນິກ ຂອງພາຫະນະ (ລົດ) ແລະ ມາດຕະຖານຂອງຜູ້ຂັບລົດຂົນສົ່ງສິນຄ້າ ເພື່ອຮັບປະກັນດ້ານສຸຂະອະນາໄມ ແລະ ຮັບປະກັນຕໍ່ມາດຕະການປ້ອງກັນເຊື້ອພະຍາດຕ່າງໆ ໂດຍສະເພາະພະຍາດໂຄວິດ-19.

8) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຮີບຮ້ອນຄົ້ນຄວ້າ ກຳນົດເງື່ອນໄຂ, ມາດຕະຖານຂອງທ່າບົກ ຢູ່ນາເຕີຍ ເພື່ອໃຫ້ດຳເນີນການປະມູນ, ລົງມືກໍ່ສ້າງ ແລະ ສາມາດໃຫ້ການບໍລິການໄດ້ໄວ, ພ້ອມກັນນັ້ນ ກໍໃຫ້ຄົ້ນຄວ້າວາງນະໂຍບາຍ, ການຄຸ້ມຄອງ ຢ່າງຮັດກຸມ ແລະ ມີປະສິດທິຜົນ, ໃນນັ້ນ ການຄັດເລືອກເອົາບໍລິສັດ ມາພັດທະນາທ່າບົກ ແລະ ເຂດໂລຈິດສະຕິກຢູ່ນາເຕີຍ ແມ່ນຕ້ອງບົນພື້ນຖານບໍລິສັດ ທີ່ໃຫ້ຜົນປະໂຫຍດສູງສຸດຕໍ່ລັດຖະບານ, ໂດຍຖອດຖອນບົດຮຽນການພັດທະນາຢູ່ ທ່າບົກທ່ານາແລ້ງ ແລະ ວຽງຈັນໂລຈິດສະຕິກ, ທ່າບົກສະຫວັນ-ເຊໂນ, ທ່າບົກວັງເຕົ່າ.

9) ໃຫ້ກະຊວງການຕ່າງປະເທດ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ເຈລະຈາກັບຝ່າຍຈີນ ເພື່ອສະເໜີຍົກລະດັບດ່ານຊາຍແດນຕ່າງໆ ຂອງບັນດາແຂວງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ.

10) ໃຫ້ກຳນົດທິດທາງການປັບປຸງ ລະບອບ ແລະ ແບບແຜນວິທີເຮັດວຽກຂອງບັນດາກະຊວງ ໃນການແກ້ໄຂບັນຫາຕົວຈິງ ທີ່ເກີດຂຶ້ນຢູ່ຂະແໜງການ ແລະ ທ້ອງຖິ່ນ ໃຫ້ໄວຂຶ້ນ, ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນໃຈກາງສົມທົບກັບຫ້ອງວ່າການສູນກາງພັກ ແລະ ພາກສ່ວນກ່ຽວຂ້ອງ ຂຶ້ນແຜນການເຮັດວຽກຂອງບັນດາການນຳ ເພື່ອລົງຕິດຕາມ, ຊຸກຍູ້ ແລະ ແກ້ໄຂບັນຫາຕ່າງໆ ໃຫ້ວ່ອງໄວ ແລະ ທັນສະພາບການ.

11) ໃຫ້ບັນດາກະຊວງກ່ຽວຂ້ອງ ສ້າງແຜນການປະຕິບັດງານ ໂດຍໃຫ້ມີກຳນົດເວລາໃນການຈັດຕັ້ງປະຕິບັດສຳເລັດຄັກແນ່ ແລ້ວລາຍງານຜົນການຈັດຕັ້ງປະຕິບັດຕາມທິດຊີ້ນຳ ທີ່ລະບຸໃນ ຂໍ້ທີ 1 ຂ້າງເທິງໃຫ້ທ່ານ ນາຍົກລັດຖະມົນຕີ ຊ້າສຸດບໍ່ໃຫ້ກາຍ ວັນທີ 15 ເດືອນມີນາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ອາລຸນໄຊ ສູນນະລາດ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ, ທ່ານລະ | 04 ສະບັບ |
| 2. ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ | 01 ສະບັບ |
| 4. ທ່ານ ປະທານຄະນະກຳມະການຮ່ວມມືລາວ-ຈີນ | 01 ສະບັບ |
| 5. ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. ທ່ານ ເຈົ້າແຂວງອຸດົມໄຊ | 01 ສະບັບ |
| 7. ກົມເລຂາ, ຫສນຍ | 01 ສະບັບ |
| 8. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 9. ບໍລິສັດ ທາງລົດໄຟ ລາວ-ຈີນ | 01 ສະບັບ |
| 10. ສຳເນົາ | 01 ສະບັບ |



Generated by CamScanner